ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 116 /ບທວລ

ນະຄອນຫຼວງວຽງຈັນ, ວັນທີ 02 JUL 2026

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,

ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ກຸ່ມທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ເລື່ອງ: ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈຳໄຕມາດ 2 ປີ 2026.

- ຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊິມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປທ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດລາຍງານມາຍັງ ທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງ ບໍລິສັດ ນັບແຕ່ບໍລິສັດໄດ້ ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

1. ສຳລັບວຽກງານການຊື້ຮຸ້ນຂອງບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ຍັງບໍ່ທັນສຳເລັດເນື່ອງຈາກວ່າເງິນທຶນຍັງບໍ່ທັນມີຄາດວ່າຈະສຳເລັດພາຍໃນທ້າຍ 2026
2. ໂຄງການກໍ່ສ້າງຕຶກສຳນັກງານ ບໍລິສັດ ກຳລັງຕົບແຕ່ງພາຍໃນໄດ້ 40%.
3. ການຈ່າຍເງິນອຸດໜູນ ອອກການໃຫ້ອາດີດພະນັກງານ ຂອງບໍລິສັດ ທີ່ຍັງເຫຼືອອີກຈຳນວນ 25% ບໍລິສັດຄາດວ່າຈະຈ່າຍໃຫ້ສຳເລັດພາຍໃນເດືອນ 12/2026 ນີ້.
4. ຂັ້ນຕອນແລ່ນເອກະສານຂໍສິດນຳໃຊ້ທີ່ດິນຂອງໂຄງການແມ່ນສຳເລັດ 80% ແລະໃກ້ຈະສຳເລັດ 100%ໃນໄວໆນີ້ ເພື່ອຂໍເຈລະຈາ ແລະເຊັນສັນຍາກັບລັດຖະບານຕາມຄາດໝາຍທີ່ວາງໄວ້.
5. ໂຄງການກໍ່ສ້າງພະພຸດທະຮູບພູຜາບ໋ວ ວັງວຽງໄດ້ເລີ່ມລົງມືກໍ່ສ້າງເສັ້ນທາງເຂົ້າສຳເລັດແລ້ວ 80%.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່ ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນັຍເຫຼີຍ

ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
Phonphanao Village, Saysettha District, Vientiane Capital, Lao PDR
Tel: (856-21) 451116, 451222, Facebook: Lao Culture Tourism Public Group Company